**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

# ຜ-ຟຟລ ໄດ້ຮັບລາງວັນ Green leadership ໃນງານ Asia Responsible Enterprise Award (AREA) 2018

ໃນວັນທີ 1 ມິຖຸນາ 2018, ຜ-ຟຟລ ໄດ້ຮັບລາງວັນດີເດັ່ນໃນຂະແໜງ Green leadership ລາງວັນດັ່ງກ່າວມອບໃຫ້ກັບບັນດາວິສາຫະກິດທີ່ໄດ້ປະກອບສ່ວນໃນການມີສ່ວນຮ່ວມຕໍ່ການສົ່ງເສີມຄວາມຍືນຍົງຂອງສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ພາຍໃຕ້ ລາງວັນທຸລະກິດທີ່ມີສ່ວນຮ່ວມຕໍ່ສັງຄົມແຫ່ງອາຊີ (Asia Responsible Enterprise Award) ປະຈຳປີ 2018 ຊຶ່ງມອບໂດຍ Enterprise Asia, ທີ່ ນະຄອນຫຼວງມະນິລາ, ປະເທດ ຟີລິປິນ. ໃນໂອກາດດຽວກັນ, ທີມງານ ຜ-ຟຟລ ກໍໄດ້ເຂົ້າຮ່ວມ ກອງປະຊຸມສຸດຍອດການມີສ່ວນຮ່ວມໃນສັງຄົມສາກົນ (ICS) ເຊິ່ງໄດ້ຈັດຂຶ້ນໃນມື້ດຽວກັນນີ້, ICS ໄດ້ຮວບຮວມເອົາ ນັກຄິດ, ນັກປະຕິບັດ, ນັກເວົ້າ ແລະ ຜູ້ນຳທາງດ້ານ Corporate Social Responsible (CSR) ຂອງໂລກ ເພື່ອປະກອບຄຳຄິດຄຳເຫັນ ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານ CSR ໃນຍຸກປະຈຸບັນນີ້. ງານດັ່ງກ່າວໄດ້ມີຜູ້ເຂົ້າຮ່ວມຫຼາຍກວ່າ 250 ຄົນຈາກ 15 ປະເທດໃນອາຊີ.